# ຜູ້ໂຊກດີ ໄດ້ຮັບລາງວັນໄປຊົມເຕະບານ ICC ຢູ່ທີ່ສິງກະໂປ

## ໃນໂຄງການ International Champions Cup Singapore 'Top Spender" Usage Campaign ລະຫວ່າງວັນທີ 25-27 ກໍລະກົດ 2018

ໃນວັນພະຫັດ ວັນທີ 19 ກໍລະກົດ 2018 ທີ່ສໍານັກງານໃຫຍ່ ທຄຕລ ໄດ້ຈັດພິທີມອບລາງວັນໃຫ້ແກ່ຜູ້ໂຊກດີທີ່ໄດ້ຮັບລາງວັນໄປຊົມການແຂ່ງຂັນບານເຕະ ICC ທີ່ປະເທດ ສິງກະໂປ ໃນໂຄງການ International Champions Cup Singapore "Top Spender" Usage Campaign ຢ່າງເປັນທາງການ. ໃຫ້ກຽດເຂົ້າຮ່ວມພິທີເປັນສັກຂີພະຍານໂດຍ ທ່ານ ນັນທະລາດ ແກ້ວປະເສີດ ຮອງຜູ້ອໍານວຍການໃຫຍ່ ທຄຕລ, ພ້ອມດ້ວຍຜູ້ຕາງໜ້າຈາກກົມຄຸ້ມຄອງທະນາຄານທຸລະກິດ, ກົມບໍລິການ ທະນາຄານແຫ່ງ ສປປ ລາວ, ຄະນະພະແນກ, ຄະນະສູນ, ສາຂານະຄອນຫຼວງວຽງຈັນ, ສາຂາດົງໂດກ, ສາຂາໄຊເສດຖາ, ພະນັກງານ ທຄຕລ ແລະ ສື່ມວນຊົນກໍ່ໄດ້ເຂົ້າຮ່ວມຢ່າງພ້ອມພຽງ. ໃນການມອບລາງວັນຄັ້ງນີ້ໃຫ້ກຽດມອບໂດຍ ທ່ານ ນັນທະລາດ ແກ້ວປະເສີດ ຮອງຜູ້ອໍານວຍການໃຫຍ່ ທຄຕລ, ເຊິ່ງຜູ້ໂຊກດີໄດ້ຮັບລາງວັນໄດ້ແກ່ **ທ່ານ ນາງ ອາລຸນນີ ວົງຊາຕິ** ເຊິ່ງເປັນຜູ້ທີ່ມີຍອດສູງສຸດໃນການນໍາໃຊ້ບັດ BCEL ATM UnionPay ປະເພດບັດຄໍາ ໃນການຊໍາລະຄ່າສິນຄ້າ ແລະ ບໍລິການຜ່ານເຄື່ອງຮູດບັດຢູ່ຕ່າງປະເທດ ໃນລະຫວ່າງວັນທີ 22 ມິຖຸນາ 2018 ຈົນເຖິງ ວັນທີ 15 ກໍລະກົດ 2018 ຜ່ານມານີ້.



ລາງວັນທີ່ຜູ້ໂຊກດີໄດ້ຮັບແມ່ນ ບັດເຂົ້າຊົມເບິ່ງການແຂ່ງຂັນບານເຕະ International Champions Cup ເປັນຄູ່ທີ່ພົບກັນລະຫວ່າງ ແອດເລຕິໂກ້ ແມັດຖິດ ຈາກສະເປນ (Atlético De Madrid) VS ອາສະນໍ ຈາກອັງກິດ (Arsenal) ຈໍານວນ 2 ບ່ອນນັ່ງ, ປີ້ຍົນໄປກັບປະເທດສິງກະໂປ 2 ລາງວັນ ພ້ອມທີ່ພັກໂຮງແຮມ 5 ດາວ (2 ຄືນ) ລວມມູນຄ່າຫຼາຍກວ່າ 12.000.000 ກີບ ໃນລະຫວ່າງ ວັນທີ 25 - 27 ກໍລະກົດ 2018 ນີ້.

ກິດຈະກໍາດີໆແບບນີ້ ເປັນອີກໜຶ່ງໂຄງການທີ່ ທຄຕລ ຈັດຂຶ້ນເພື່ອສະແດງຄວາມຂອບໃຈ ແລະ ຄືນກໍາໄລໃຫ້ແກ່ລູກຄ້າຂອງ ທຄຕລ, ທັງເປັນການສົ່ງເສີມລູກຄ້ານໍາໃຊ້ບັດ ATM ແທນເງິນສົດ, ຫຼຸດຜ່ອນຄວາມສ່ຽງໃນການຖືເງິນສົດ ແລະ ສ້າງຄວາມສະດວກສະບາຍໃຫ້ແກ່ລູກຄ້າ. ຄຽງຄູ່ກັນນັ້ນ, ທຄຕລ ເອງກໍ່ຈະສືບຕໍ່ພັດທະນາການບໍລິການຜະລິດຕະພັນບັດເຊື່ອມກັບບໍລິການອື່ນໆທັງພາຍໃນ ແລະ ຕ່າງປະເທດ ໃຫ້ມີຄວາມສະດວກສະບາຍ ແລະ ພັດທະນາຜະລິດຕະພັນໃຫ້ມີຄວາມຫຼາກຫຼາຍຕອບສະໜອງຕາມຄວາມຮຽກຮ້ອງຕ້ອງການຂອງສັງຄົມຢ່າງຕັ້ງໜ້າ.






BCEL
ພິທີມອບລາງວັນໃຫ້ແກ່ຜູ້ໂຊກດີ ໄດ້ຮັບລາງວັນບັດເຂົ້າຊົມການແຂ່ງຂັນບານເຕະ ICC ທີ່ປະເທດ ສິງກະໂປ
International Champions Cup Singapore "Top Spender" Usage Campaign
ຜູ້ໂຊກດີຊົມບານເຕະ ICC ທີ່ສິງກະໂປ
S$ 2.000


BCEL
ພິທີມອບລາງວັນໃຫ້ແກ່ຜູ້ໂຊກດີ ໄດ້ຮັບລາງວັນບັດເຂົ້າຊົມການແຂ່ງຂັນບານເຕະ ICC ທີ່ປະເທດ ສິງກະໂປ
S$ 2.000